ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 001 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 12 / 01 / 26

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບລະດັບຊາດ ເພື່ອຈັດຕັ້ງປະຕິບັດວຽກງານ ອຸທິຍານທໍລະນີ (GEOPARK) ໃນ ສປປ ລາວ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ ສະບັບປັບປຸງ ເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 2635/ກສ, ລົງວັນທີ 10 ທັນວາ 2025.

## ນາຍົກລັດຖະມົນຕີ ຕົກລົງ:

**ມາດຕາ 1** ແຕ່ງຕັ້ງຄະນະຮັບຜິດຊອບຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີ (GEOPARK) ໃນ ສປປ ລາວ ດັ່ງນີ້:

**I. ຄະນະຊີ້ນຳລວມປະກອບມີບັນດາທ່ານດັ່ງລຸມນີ້:**

| | |
|---|---|
| 1. ທ່ານ ລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ | ເປັນປະທານ |
| 2. ທ່ານ ຮອງລັດຖະມົນຕີກະຊວງກະສິກຳ ແລະ ສິ່ງແວດລ້ອມ | ເປັນຮອງປະທານ ຜູ້ປະຈຳການ |
| 3. ທ່ານ ຮອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ | ເປັນກຳມະການ |
| 4. ທ່ານ ຮອງລັດຖະມົນຕີກະຊວງວັດທະນະທຳ ແລະ ທ່ອງທ່ຽວ | ເປັນກຳມະການ |
| 5. ທ່ານ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ | ເປັນກຳມະການ |
| 6. ທ່ານ ຮອງລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ | ເປັນກຳມະການ |
| 7. ທ່ານ ຮອງລັດຖະມົນຕີກະຊວງການຕ່າງປະເທດ | ເປັນກຳມະການ |
| 8. ທ່ານ ຮອງລັດຖະມົນຕີກະຊວງປ້ອງກັນປະເທດ | ເປັນກຳມະການ |
| 9. ທ່ານ ຮອງປະທານກຳມະການປົກຄອງແຂວງ (ເຂດທີ່ຈະນຳສະເໜີເປັນອຸທິຍານທໍລະນີໂລກ) | ເປັນກຳມະການ |

**ມາດຕາ 2** ສິດ ແລະ ໜ້າທີ່ຂອງຄະນະຊີ້ນຳລວມມີດັ່ງນີ້:

- ນຳພາ-ຊີ້ນຳ ແລະ ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດວຽກງານທໍລະນີ ຂອງ ສປປ ລາວ ຢ່າງເປັນປົກ ກະຕິ;
- ພິຈາລະນາ ແລະ ສະເໜີຕໍ່ຂັ້ນເທິງ ຮັບຮອງເອົາບັນດາລະບຽບການ, ບົດແນະນຳທາງວິຊາການ ແລະ ຂໍ້ຕົກລົງຕ່າງໆ ທີ່ຕິດພັນກັບວຽກງານທໍລະນີ ຂອງ ສປປ ລາວ;
- ລາຍງານການຈັດຕັ້ງປະຕິບັດວຽກງານທໍລະນີ ແຫ່ງ ສປປ ລາວ ໃຫ້ລັດຖະບານ ຢ່າງເປັນປົກກະຕິ.

**ມາດຕາ 3** ແຕ່ງຕັ້ງຄະນະວິຊາການ ມີດັ່ງນີ້:

| | |
|---|---|
| 1. ທ່ານ ຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ | ເປັນຫົວໜ້າ |
| 2. ທ່ານ ຮອງຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ | ເປັນຮອງ, ຜູ້ປະຈຳການ |

3. ທ່ານ ຮອງຫົວໜ້າກົມທໍລະນີສາດ ແລະ ບໍ່ແຮ່, ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນຄະນະ
4. ທ່ານ ຮອງຫົວໜ້າກົມຄຸ້ມຄອງວິທະຍາສາດ, ກະຊວງສຶກສາທິການ ແລະ ກິລາ ເປັນຄະນະ
5. ທ່ານ ຮອງຫົວໜ້າກົມຮ່ວມມືກັບຕ່າງປະເທດ, ກະຊວງສຶກສາທິການ ແລະ ກິລາ ເປັນຄະນະ
6. ທ່ານ ຮອງຫົວໜ້າກົມມໍຣະດົກ, ກະຊວງວັດທະນະທໍາ ແລະ ທ່ອງທ່ຽວ ເປັນຄະນະ
7. ທ່ານ ຮອງຫົວໜ້າກົມຄຸ້ມຄອງ ແລະ ພັດທະນາທີ່ດິນ,ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເປັນຄະນະ
8. ທ່ານ ຮອງຫົວໜ້າກົມພັດທະນາການທ່ອງທ່ຽວ, ກະຊວງວັດທະນະທໍາ ແລະ ທ່ອງທ່ຽວ ເປັນຄະນະ
9. ທ່ານ ຮອງຫົວໜ້າສະຖາບັນຄົ້ນຄວ້າກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ເປັນຄະນະ
10. ທ່ານ ຮອງຫົວໜ້າກົມອຸຕຸນິຍົມ ແລະ ອຸທົກກະສາດ, ກະຊວງກະສິກໍາ ແລະ ສິ່ງແວດລ້ອມ ເປັນຄະນະ
11. ທ່ານ ຮອງຫົວໜ້າພະແນກກະສິກໍາ ແລະ ສິ່ງແວດລ້ອມ ແຂວງ (ເຂດທີ່ຈະນໍາສະເໜີເປັນອຸທິຍານທໍລະນີ) ເປັນຄະນະ
12. ທ່ານ ຮອງຫົວໜ້າພະແນກວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ (ເຂດທີ່ຈະນໍາສະເໜີເປັນອຸທິຍານທໍລະນີ) ເປັນຄະນະ
13. ທ່ານ ຮອງຫົວໜ້າພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ (ເຂດທີ່ຈະນໍາສະເໜີເປັນອຸທິຍານທໍລະນີໂລກ) ເປັນຄະນະ
14. ທ່ານ ຮອງຫົວໜ້າພະແນກສຶກສາທິການແລະ ກິລາແຂວງ (ເຂດທີ່ຈະນໍາສະເໜີເປັນອຸທິຍານທໍລະນີໂລກ) ເປັນຄະນະ

**ມາດຕາ 4 ຄະນະວິຊາການມີສິດ ແລະ ໜ້າທີ່ ດັ່ງນີ້:**

- ຄົ້ນຄວ້າ ແລະ ປະກອບຂໍ້ມູນ ກ່ຽວກັບແຫຼ່ງທໍລະນີ ໃນ ສປປ ລາວ ທີ່ມີທ່າແຮງຈະນໍາສະເໜີເຂົ້າເປັນອຸທິຍານທໍລະນີໂລກ ຂອງອຸຍແນສໂກ ເພື່ອນໍາສະເໜີລັດຖະບານ ພິຈາລະນາຮັບຮອງ;
- ກະກຽມເອກະສານການນໍາສະເໜີອຸທິຍານທໍລະນີຂອງ ສປປ ລາວ ທີ່ລັດຖະບານຮັບຮອງ ເພື່ອຍື່ນສະເໜີເຂົ້າເປັນອຸທິຍານທໍລະນີໂລກ ຂອງອຸຍແນສໂກ;
- ວາງແຜນປະຕິບັດງານ ຂອງຄະນະກໍາມະການຮັບຜິດຊອບການຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີ;
- ລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີໃຫ້ຄະນະຊີ້ນໍາລວມເປັນແຕ່ລະໄລຍະ.

**ມາດຕາ 5 ແຕ່ງຕັ້ງຄະນະວິທະຍາສາດ ມີດັ່ງນີ້:**

1. ຄະນະວິທະຍາສາດທໍາມະຊາດ, ມະຫາວິທະຍາໄລແຫ່ງຊາດ;
2. ຄະນະວິທະຍາສາດສັງຄົມ, ມະຫາວິທະຍາໄລແຫ່ງຊາດ;
3. ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ;
4. ຄະນະວິທະຍາສາດສິ່ງແວດລ້ອມ, ມະຫາວິທະຍາໄລແຫ່ງຊາດ;
5. ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ມະຫາວິທະຍາໄລແຫ່ງຊາດ;
6. ຄະນະວິສະວະກໍາສາດ, ມະຫາວິທະຍາໄລແຫ່ງຊາດ;
7. ສະຖາບັນການເມືອງການປົກຄອງ ແຫ່ງຊາດ;
8. ຄະນະຊ່ຽວຊານ, ນັກວິທະຍາສາດ, ສະຖາບັນການສຶກສາ ພາຍນອກ.

**ມາດຕາ 6 ຄະນະວິທະຍາສາດ ມີສິດ ແລະ ໜ້າທີ່ ດັ່ງນີ້:**

- ສະໜັບສະໜູນຄະນະຊີ້ນໍາ ແລະ ກອງເລຂາ ຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີ ໃນ ສປປ ລາວ;
- ດໍາເນີນການສຶກສາ, ສໍາຫຼວດ, ເກັບຕົວຢ່າງ, ສັງລວມ ແລະ ວິເຄາະຂໍ້ມູນທາງດ້ານວິທະຍາສາດ ເພື່ອສະໜັບສະໜູນວຽກງານອຸທິຍານທໍລະນີ ໃນ ສປປ ລາວ;
- ເຂົ້າຮ່ວມກອງປະຊຸມປະຈໍາປີ ແລະ ກອງປະຊຸມອື່ນໆ ທີ່ກໍາມາທິການ ແລະ ອະນຸກໍາມາທິການ ຈັດຂຶ້ນ;

- ປະສານສົມທົບກັບອົງການຈັດຕັ້ງສາກົນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອສະໜັບສະໜູນດ້ານວິຊາການເຂົ້າໃນການຈັດຕັ້ງປະຕິບັດວຽກງານທໍລະນີສາດ ໃນ ສປປ ລາວ.

**ມາດຕາ 7** ແຕ່ງຕັ້ງກອງເລຂາຊ່ວຍວຽກຄະນະດັ່ງກ່າວ ມີດັ່ງນີ້:

1. ທ່ານ ຮອງຫົວໜ້າກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຫົວໜ້າ
2. ທ່ານ ຫົວໜ້າພະແນກຄຸ້ມຄອງປ່າສະຫງວນ, ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຮອງຫົວໜ້າ
3. ທ່ານ ຫົວໜ້າພະແນກແຜນການ ແລະ ການຮ່ວມມື, ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຄະນະ
4. ທ່ານ ຫົວໜ້າກອງສຳຫຼວດປ່າໄມ້ ແລະ ປ້ອງກັນໄຟປ່າ, ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຄະນະ
5. ທ່ານ ຫົວໜ້າພະແນກສຳຫຼວດແຫຼ່ງທໍລະນີ ແລະ ຫໍພິພິທະພັນ, ກົມທໍລະນີສາດ ແລະ ແຮ່ທາດ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ
6. ທ່ານ ຮອງຫົວໜ້າພະແນກສັງລວມ, ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຄະນະ
7. ທ່ານ ຮອງຫົວໜ້າພະແນກບູຮານວິທະຍາ, ກົມມໍຣະດົກ, ກະຊວງວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ
8. ທ່ານ ຮອງຫົວໜ້າພະແນກ, ຫ້ອງການເລຂາ ຄະນະກຳມາທິການແຫ່ງຊາດລາວ ເພື່ອຢູແນສໂກ້ ເປັນຄະນະ
9. ທ່ານ ຮອງຫົວໜ້າພະແນກສຳຫຼວດ, ອອກແບບ ແລະ ຈັດສັນແຫຼ່ງທ່ອງທ່ຽວ ກົມພັດທະນາການທ່ອງທ່ຽວ, ກະຊວງວັດທະນະທຳ ແລະ ທ່ອງທ່ຽວ ເປັນຄະນະ
10. ທ່ານ ຮອງຫົວໜ້າພະແນກຄຸ້ມຄອງປ່າສະຫງວນ, ກົມປ່າໄມ້, ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນຄະນະ

**ມາດຕາ 8** ກອງເລຂາຊ່ວຍວຽກຄະນະ ມີສິດ ແລະ ໜ້າທີ່ ດັ່ງນີ້:

- ກະກຽມດ້ານເນື້ອໃນ ແລະ ເຜີຍແຜ່ບັນດາເອກະສານ ແລະ ຄຳເຫັນ ຂອງຄະນະຊີ້ນຳລວມ ແລະ ຄະນະວິຊາການ ໃນການຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີ ໃນ ສປປ ລາວ ຕໍ່ກອງປະຊຸມສາມັນ ແລະ ວິສາມັນ;
- ເກັບກຳສັງລວມເອົາການສະເໜີວາລະຈາກຄະນະຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີເພື່ອຮຽກປະຊຸມສາມັນ ແລະ ລະດົມການປະຊຸມວິສາມັນ;
- ກະກຽມບົດລາຍງານຜົນໄດ້ຮັບຂອງການຈັດຕັ້ງປະຕິບັດກິດຈະກຳ ແລະ ການຄຸ້ມຄອງການເງິນ ເພື່ອຂໍທິດຊີ້ນຳຈາກຄະນະຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີ ໃນ ສປປ ລາວ ກ່ຽວກັບບັນດາກິດຈະກຳ ແລະ ງົບປະມານໃນຕໍ່ໜ້າ;
- ເກັບຮັກສາບັນຊີລາຍຊື່, ຂໍ້ມູນຕິດຕໍ່ ແລະ ປະສານງານກັບຄະນະຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີຢ່າງເປັນປົກກະຕິ;
- ປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ອຳນວຍຄວາມສະດວກບັນດາວຽກງານທີ່ຕິດພັນກັບການຈັດຕັ້ງປະຕິບັດອຸທິຍານທໍລະນີ ໃນ ສປປ ລາວ ລວມທັງຂະບວນການດຳເນີນເອກະສານຕ່າງໆ ສຳລັບຄະນະຊ່ຽວຊານ ແລະ ນັກວິທະຍາສາດ ທີ່ເຂົ້າຮ່ວມດຳເນີນການສຶກສາຄົ້ນຄວ້າ.

**ມາດຕາ 9** ກອງປະຊຸມ

- ກອງປະຊຸມສາມັນ ຈັດຂຶ້ນຢ່າງໜ້ອຍ ສອງຄັ້ງຕໍ່ປີ ໃນເດືອນມິຖຸນາ ແລະ ທັນວາ ຫຼື ຕາມວັນເວລາທີ່ປະທານຄະນະຊີ້ນຳລວມ ໄດ້ກຳນົດ;

- ກອງປະຊຸມວິສາມັນ ຈັດຂຶ້ນຕາມການສະເໜີ ຂອງສະມາຊິກຄະນະຊີ້ນຳລວມ ແລະ ຄະນະວິຊາການ ຢ່າງໜ້ອຍ 3 ຄົນ.

ທຸກກອງປະຊຸມ ສາມາດຈັດແບບປະສົມ ລະຫວ່າງການເຂົ້າຮ່ວມແບບເຊິ່ງໜ້າ ແລະ ແບບທາງໄກຜ່ານລະບົບອອນລາຍ. ກອງເລຂາຈະເປັນຄົນກະກຽມກອງປະຊຸມ ແລະ ເຜີຍແຜ່ຄຳເຊີນ ແລະ ບົດບັນທຶກກອງປະຊຸມ.

ກອງປະຊຸມສາມັນ ແລະ ກອງປະຊຸມວິສາມັນແຕ່ລະຄັ້ງ ຈະສ້າງບົດບັນທຶກກອງປະຊຸມໂດຍມີການຕັດສິນໃຈ ແລະ ການປະຕິບັດໃນຕໍ່ໜ້າ ທີ່ໄດ້ຕົກລົງກັນໄວ້ ຊຶ່ງຈະລວມເຖິງການສະແດງຄວາມເຫັນ ຂອງສະມາຊິກແຕ່ລະຄົນ ຂອງຄະນະຊີ້ນຳລວມ, ຄະນະວິຊາການ ແລະ ຄະນະວິທະຍາສາດ.

**ມາດຕາ 10** ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີ ໃນ ສປປ ລາວ

ແຫຼ່ງທຶນທີ່ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີ ໃນ ສປປ ລາວ ມີດັ່ງນີ້:

1. ງົບປະມານຂອງລັດ;
2. ການປະກອບທຶນຂອງກິດຈະການ ຫຼື ໂຄງການທີ່ດຳເນີນຢູ່ໃນເຂດອຸທິຍານທໍລະນີ ຫຼື ພື້ນທີ່ໃກ້ຄຽງທີ່ສົ່ງຜົນກະທົບຕໍ່ພື້ນທີ່ອຸທິຍານທໍລະນີ;
3. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງຂອງລັດ, ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
4. ແຫຼ່ງທຶນອື່ນທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 11** ມອບໃຫ້ຄະນະຈັດຕັ້ງປະຕິບັດວຽກງານອຸທິຍານທໍລະນີ ໃນ ສປປ ລາວ ເປັນເຈົ້າການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 12** ບັນດາກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດວຽກງານດັ່ງກ່າວໃຫ້ໄດ້ຮັບຜົນດີ.

**ມາດຕາ 13** ຂໍ້ຕົກລົງສະບັບນີ້ ມີຜົນນຳໃຊ້ໄດ້ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**